ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ LIWG

# ຈົດໝາຍຂ່າວ

# ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ

ສະບັບປະຈຳເດືອນ ເມສາ - ມິຖຸນາ 2020

## ກອງປະຊຸມ ແລະ ກິດຈະກຳ

ໃນໄຕມາດນີ້ ກອງເລຂາໄດ້ຈັດກອງປະຊຸມກ່ຽວກັບວຽກງານຂອງເຄືອຂ່າຍ ພ້ອມທັງມີການປະຊຸມອອນລາຍ

## ໂຄງການໄລຟ໌

ທີມງານໂຄງການໄດ້ຈັດການຝຶກອົບຮົມແບບໃກ້ຊິດ ແກ່ຫຼາຍພາກສ່ວນ ພ້ອມທັງໄດ້ມີການພັດທະນາຄູ່ມືໃໝ່ ເພື່ອປະກອບການຝຶກອົບຮົມ

## ບົດຄວາມ ແລະ ປື້ມເລື່ອງ

ບົດອ່ານ ແລະ ປື້ມເລື່ອງກ່ຽວກັບທີ່ດິນ ແລະ ຊັບພະຍາກອນທຳມະຊາດ ໃນເວັບໄຊທ໌ຂອງ ທີ່ພວກເຮົາຢາກແນະນຳໃຫ້ທ່ານໄດ້ອ່ານ

## ການສຳມະນາອອນລາຍກ່ຽວກັບເລື່ອງທີ່ດິນ

ໃນໄຕມາດນີ້ ພວກເຮົາໄດ້ແນະນຳບາງຫົວຂໍ້ສົນທະນາທາງອອນລາຍທີ່ນ່າສົນໃຈກ່ຽວກັບເລື່ອງທີ່ດິນ ທີ່ໄດ້ຈັດຂຶ້ນຈາກຫຼາຍອົງການສາກົນ

## ຂ່າວເດັ່ນປະຈຳໄຕມາດ

ບາງປະເດັນທີ່ນ່າສົນໃຈທີ່ມີການລາຍງານໃນຂ່າວກ່ຽວກັບປະເດັນທີ່ດິນ ແລະ ຊັບພະຍາກອນທຳມະຊາດ



## ຂໍ້ມູນສຳຄັນ:

ຮ່າງກົດໝາຍທີ່ດິນສະບັບປັບປຸງ ທີ່ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນຳສະເໜີເພື່ອຜ່ານກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດໃນປີ 2019 ນັ້ນ ແມ່ນຍັງບໍ່ທັນປະກາດໃຊ້ຢ່າງເປັນທາງການເທື່ອ. ຮ່າງກົດໝາຍແມ່ນກຳລັງຢູ່ໃນຂັ້ນຕອນລໍຖ້າການເຊັນຮັບຮອງເອົາຈາກປະທານສະພາແຫ່ງຊາດ.

ຈົດໝາຍຂ່າວຂອງພວກເຮົາແມ່ນມີຈຸດປະສົງ ເພື່ອນຳສະເໜີກ່ຽວກັບບັນດາກິດຈະກຳຕ່າງໆທີ່ໄດ້ຈັດຕັ້ງປະຕິບັດໂດຍ ກອງເລຂາກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ, ເຄືອຂ່າຍ, ຄູ່ຮ່ວມງານ ແລະ ໂຄງການລິເລີ່ມກ່ຽວກັບວຽກງານທີ່ດິນ, ການປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ການສົ່ງເສີມການເຄົາລົບສິດທິຂອງຊຸມຊົນ ຕໍ່ກັບການຄອບຄອງທີ່ດິນ ແລະ ຊັບພະຍາກອນທຳມະຊາດ.

# ກິດຈະກຳ ແລະ ກອງປະຊຸມທີ່ຈັດຂື້ນໂດຍກອງເລຂາ LIWG

## ຄວາມຄືບໜ້າຂອງການປັບປຸງກົດໝາຍທີ່ດິນ

ກຸ່ມວິຊາການເພື່ອການປັບປຸງກົດໝາຍ ແລະ ນະໂຍບາຍກ່ຽວກັບທີ່ດິນ ແມ່ນປະກອບມີສະມາຊິກ 19 ທ່ານຈາກ ອົງການຈັດຕັ້ງທາງສາກົນ, ໂຄງການ ແລະ ຄູ່ຮ່ວມພັດທະນາໃນປະເທດລາວ ໂດຍແມ່ນກອງເລຂາ LIWG ເປັນຜູ້ປະສານງານໃນກຸ່ມ.ໃນເດືອນມິຖຸນາປີນີ້ກໍ່ໄດ້ມີການຈັດກອງປະຊຸມ ເພື່ອປຶກສາຫາລືກັນກ່ຽວກັບຜົນໄດ້ຮັບຈາກບົດປະເມີນການສົມທຽບຊ່ອງຫວ່າງຂອງກົດໝາຍທີ່ດິນສະບັບປີ 2003 ແລະ ຮ່າງກົດໝາຍທີ່ດິນສະບັບປັບປຸງປີ 2019 ແລະ ສົມທຽບໃສ່ກັບກົດໝາຍປ່າໄມ້ສະບັບປີ 2007 ໂດຍແນ່ໃສ່ເລື່ອງຂອງການຮັບຮູ້ສິດທິຄອບຄອງຕາມປະເພນີຂອງປະຊາຊົນບັນດາເຜົ່າຕໍ່ກັບທີ່ດິນ ແລະ ປ່າໄມ້. ຜົນຈາກກອງປະຊຸມຄັ້ງນີ້ ແມ່ນຈະອີງ ໃສ່ບົດວິເຄາະຈາກການປະເມີນຄັ້ງນີ້ເປັນບ່ອນອີງ ເພື່ອທີ່ຈະນຳໄປສ້າງເປັນຄຳແນະນຳໂດຍຫຍໍ້ ໃນອະນາຄົດຕໍ່ ດຳລັດ ແລະ ລະບຽບການໃນການປະຕິບັດກົດໝາຍທີ່ຕິດພັນກັບການຮັບຮູ້ສິດທິການຄອບຄອງຕາມປະເພນີຂອງປະຊາຊົນ.

**ຂໍ້ມູນທີ່ສຳຄັນ:** ຮ່າງກົດໝາຍທີ່ດິນສະບັບປັບປຸງ ທີ່ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນຳສະເໜີເພື່ອຜ່ານກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດໃນປີ 2019ນັ້ນ ແມ່ນຍັງບໍ່ທັນປະກາດໃຊ້ຢ່າງເປັນທາງການເທື່ອ. ຮ່າງກົດໝາຍແມ່ນກຳລັງຢູ່ໃນຂັ້ນຕອນລໍຖ້າການເຊັນຮັບຮອງເອົາຈາກປະທານສະພາແຫ່ງຊາດ



## ກອງປະຊຸມຄັ້ງທີ 1 ເພື່ອພັດທະນາປະຕິທິນກົດໝາຍສະບັບປີ 2021

ກອງປະຊຸມເພື່ອພັດທະນາປະຕິທິນກົດໝາຍແມ່ນເລີ່ມຂື້ນໃນເດືອນ 6 ຂອງທຸກໆປີ ແລະ ຂະບວນການພັດທະນາແມ່ນຈະດຳເນີນໄປຈົນເຖິງເດືອນ ທັນວາ ຂອງທຸກໆປີ. ສຳລັບກອງປະຊຸມຄັ້ງທີ 1 ປະຈຳປີ 2020 ເພື່ອພັດທະນາປະຕິທິນປີ 2021 ນີ້ ແມ່ນໄດ້ຈັດຂື້ນແຕ່ວັນທີ 8-10 ເດືອນ ມິຖຸນາ 2020 ໃນນະຄອນຫຼວງວຽງຈັນ. ກອງປະຊຸມຄັ້ງທຳອິດນີ້ແມ່ນມີຄວາມສຳຄັນຫຼາຍ ເພາະບັນດາທີມງານສ້າງປະຕິທິນ ເຊິ່ງມາຈາກສະມາຊິກຂອງ LIWG ໄດ້ມີການແລກປ່ຽນບົດຮຽນ ກ່ຽວກັບການນຳໃຊ້ປະຕິທິນສະບັບປີ 2020 ໂດຍສະເພາະ ການນຳເອົາປະຕິທິນໄປເຜີຍແຜ່ແກ່ຊຸມຊົນໃນພື້ນທີ່ຕ່າງໆ.

ໃນຕະຫຼອດປີນີ້ ຈະມີການຈັດກອງປະຊຸມຂື້ນໃນແຕ່ລະເດືອນ ເພື່ອໃຫ້ບັນດາສະມາຊິກທີມງານສ້າງປະຕິທິນມາສົນທະນາ ປຶກສາຫາລື ເພື່ອກຳນົດບັນດາຫົວຂໍ້ ແລະ ເນື້ອໃນທີ່ຕິດພັນກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃສ່ໃນປະຕິທິນກົດໝາຍສະບັບໃໝ່.

ສຳລັບການກຳນົດ ຫົວຂໍ້ ແລະ ເນື້ອໃນຈາກບັນດາກົດໝາຍທີ່ກ່ຽວຂ້ອງສຳລັບປະຕິທິນສະບັບປີ 2021 ແມ່ນຈະມີການດຳເນີນໃນກອງປະຊຸມທີ່ຈະຈັດໃນຕົ້ນເດືອນ ກໍລະກົດປີນີ້. ປະຕິທິນກົດໝາຍສະບັບປັດຈຸບັນ ແລະ ກ່ອນໜ້ານີ້ແມ່ນສາມາດເຂົ້າເບິ່ງໄດ້ທີ່ນີ້: https://bit.ly/3bMYyuh



## ກອງປະຊຸມຄະນະກຳມະການ LIWG

ຫຼັງຈາກທີ່ມີການປະກາດຜ່ອນຜັນຈາກລັດຖະບານກ່ຽວກັບ ການຜ່ອນຜັນກົດລະບຽບການສະກັດກັ້ນການລະບາດ ພະຍາດໂຄວິດ19 ໂດຍສະເພາະໃນຊ່ວງເດືອນພຶດສະພາທີ່ຜ່ານມາ ທາງກອງເລຂາ LIWG ກໍ່ໄດ້ ໄດ້ກັບມາເຮັດວຽກໃນຫ້ອງການ ແລະ ໄດ້ເລີ່ມມີການຈັດກອງປະຊຸມທາງອອນລາຍຮ່ວມກັບຄະນະກຳມະການ LIWG ເພື່ອນຳສະເໜີຄວາມຄືບໜ້າຂອງວຽກງານ, ປຶກສາຫາລືບັນຫາທີ່ສຳຄັນ ໂດຍສະເພາະການວາງແຜນ ແລະ ປັບແຜນບາງກິດຈະກຳທີ່ຈະມີຈັດຂື້ນໃນປີນີ້.

## ກອງປະຊຸມ LIWG-LIFE

ກອງເລຂາ LIWG ແລະ ທີມງານໂຄງການ LIFE (ໂຄງການສົ່ງເສີມການຮຽນຮູ້ກ່ຽວກັບທີ່ດິນ ເຊິ່ງເປັນໂຄງການລິເລີ່ມ LIWG) ໄດ້ມີການພົວພັນແລະເຮັດວຽກຮ່ວມກັນກັນໃນຕະຫຼອດຫຼາຍປີທີ່ຜ່ານມາ. ສະນັ້ນເພື່ອເປັນການສ້າງຄວາມສໍາພັນທີ່ດີ ແລະ ຖອນຖອດບົດຮຽນນຳກັນ ທັງສອງຈຶ່ງໄດ້ມີການຈັດກອງປະຊຸມແລກປ່ຽນບົດຮຽນກັນ. ຈາກກອງປະຊຸມ ນີ້ທັງສອງຝ່າຍໄດ້ທຳຄວາມເຂົ້າໃຈກັນຫຼາຍຂຶ້ນໃນບົດບາດຂອງການເຮັດວຽກຮ່ວມກັນ ໂດຍສະເພາະກໍ່ແມ່ນ ບັນດາກິດຈະກຳ ແລະ ໂຄງການທີ່ເຮັດຮ່ວມກັນໃນປັດຈຸບັນ ແລະ ແຜນໃນອະນາຄົດ.

ໂຄງການ LIFE ມີການດຳເນີນການຝຶກອົບຮົມແບບໃກ້ຊິດແກ່ຫຼາຍອົງການຈັດຕັ້ງທີ່ເປັນສະມາຊິກຂອງ LIWG ແລະ ຄູ່ຮ່ວມງານທັງພາກລັດ.



# ກິດຈະກຳ ແລະ ການຝຶກອົບຮົມ ໂຄງການ ໄລຟ໌




## ການພັດທະນາຄູ່ມືຝຶກອົບຮົມຫົວຂໍ້ໃໝ່ຮ່ວມກັບຄູ່ຮ່ວມງານ

ໃນໄລຍະການລະບາດພະຍາດໂຄວິດ 19 ໂດຍສະເພາະໃນຊ່ວງເດືອນເມສາ-ພຶດສະພາ ທີມງານໂຄງການກໍ່ໄດ້ເຮັດວຽກຢູ່ບ້ານ ແລະ ກິດຈະກຳການຝຶກອົບຮົມບາງກິດຈະກຳທີ່ໄວ້ແຜນໄວ້ໃນຊ່ວງເດືອນດັ່ງກ່າວ ແມ່ນຕ້ອງໄດ້ເລື່ອນເວລາໃນການຈັດອອກໄປ. ເຊິ່ງຢ່າງໃດກໍ່ດີ ໃນຊ່ວງເວລາທີ່ເຮັດວຽກຢູ່ບ້ານ ທາງທີມງານກໍ່ໄດ້ເຮັດວຽກກັບຄູ່ຮ່ວມງານຜ່ານທາງອອນລາຍໃນການພັດທະນາຄູ່ມືຝຶກອົບຮົມ ໃນຫົວຂໍ້ຕ່າງໆຄື:

- ການນຳໃຊ້ທີ່ດິນລວມໝູ່ ໂດຍພັດທະນາກັບ GIZ Laos ເຊິ່ງໃນຄູ່ມືນີ້ປະກອບມີການຝຶກອົບຮົມຂັ້ນສູງ ກ່ຽວກັບ ສັນຍາກະສິກຳ ແລະ ການແກ້ໄຂຂໍ້ຂັດແຍ້ງ ແລະ ສິດທິທີ່ດິນຕາມປະເພນີ ແລະ ການແກ້ໄຂຂໍ້ຂັດແຍ້ງ
- ການລົງທຶນກະສິກຳແບບມີຄວາມຮັບຜິດຊອບໂດຍພັດທະນາຮ່ວມກັບໂຄງການ LURAS ຈາກອົງການ Helvetas ລາວ
- ການນຳໃຊ້ປ່າໄມ້ບ້ານ, ການຈັດການຂີ້ເຫຍື້ອ ແລະ ຫຼຸດຜ່ອນການນຳໃຊ້ສານເຄມີ ແລະ ການປົກປັກຮັກສາສິ່ງແວດລ້ອມ (ສຳລັບໂຄງການ VOICE)

ຫຼັງຈາກມີການຜ່ອນຜັນຈາກລັດຖະບານຕໍ່ກັບກົດລະບຽບການປ້ອງກັນພະຍາດໂຄວິດ 19 ໃນຊ່ວງເດືອນ ມິຖຸນາ ທີມງານໂຄງການ LIFE ໄດ້ມີເລີ່ມກັບມາຈັດການຝຶກອົບແກ່ບັນຄູ່ຮ່ວມງານ.



## ການສ້າງວິດີໂອ ເພື່ອປະກອບໃນບົດຄູ່ມືຝຶກອົບຮົມ ຂອງ ໄລຟ໌

ໃນປັດຈຸ ໂຄງການ LIFE ກຳລັງມີການດຳເນີນສ້າງວິດີໂອ ເພື່ອເປັນເຄື່ອງມືປະກອບກັບຄູ່ມືຫຼັກສູດການຝຶກອົບຮົມ. ໜຶ່ງໃນວິດີໂອສອງຊຸດນີ້ ແມ່ນຈະມີການນຳໃຊ້ຮ່ວມກັບຄູ່ມື ການເຂົ້າເຖິງລະບົບຍຸດຕິທຳ ແລະ ບັນດາການຝຶກອົບຮົມອື່ນ ໆທີ່ມີຫົວຂໍ້ກ່ຽວກັບການເຂົ້າເຖິງຄວາມຍຸດຕິທຳ. ວິດີໂອດັ່ງກ່າວນີ້ ແມ່ນໄດ້ຮ່ວມພັດທະນາກັບ ກະຊວງຍຸຕິທຳ ແລະ ສະມາຄົມເພື່ອພັດທະນາແມ່ຍິງ ແລະ ການສຶກສາກົດໝາຍ (ADWLE).

ວິດີໂອທັງສອງ ແມ່ນຈະສຳເລັດພາຍໃນທ້າຍເດືອນ ກໍລະກົດປີນີ້.

# ການຝຶກອົບຮົມ ສິດທິທີ່ດິນຕາມປະເພນີ ແລະ ການແກ້ໄຂຂໍ້ຂັດແຍ້ງ

ການຝຶກອົບຮົມແບບໃກ້ຊິດນີ້ ແມ່ນຮ່ວມກັບ ໂຄງການ MRLG ແລະ ກົມຄຸ້ມຄອງທີ່ດິນ (DoL) ຈາກກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (MONRE) ຕາມແຜນງານຂອງໂຄງການ ການຮັບຮູ້ສິດທິການຄອບຄອງທີ່ດິນຕາມປະເພນີ ໃນເຂດປ່າໄມ້ 3 ປະເພດ (ປ່າຜະລິດ, ປ່າປ້ອງກັນ ແລະ ປ່າສະຫງວນ). ເຊິ່ງໂຄງການນີ້ ແມ່ນຈະມີການດຳເນີນປະຕິບັດໃນ ເມືອງນາກາຍ, ຫີນບູນ ແລະ ເຊບັ້ງໄຟ ໃນແຂວງຄຳມ່ວນ.

ສຳລັບບົດບາດຂອງ LIFE ໃນໂຄງການນີ້ ແມ່ນຈະຮ່ວມໃນວຽກງານ ຂອງການພັດທະນາຄວາມອາດສາມາດ ໃນການເຜີຍແຜ່ຂໍ້ມູນ ແລະ ການສົ່ງເສີມການມີສ່ວນຮ່ວມຂອງຊຸມຊົນ. ໃນຕົ້ນເດືອນ ມິຖຸນາ ທີ່ຜ່ານມາ ເພື່ອເປັນການທີມງານ LIFE ໄດ້ມີການຈັດການຝຶກອົບຮົມເພື່ອສ້າງຄວາມອາດສາມາດ ແລະ ທັກສະໃນການເຜີຍແຜ່ຂໍ້ມູນ ໃຫ້ແກ່ ກົມທີ່ດິນ (DoL), ສູນກາງແນວລາວສ້າງຊາດ (LFNC) ແລະ ສະຫະພັນແມ່ຍິງລາວ (LWU) ເຊິ່ງເປັນທີມງານທີ່ຢູ່ໃນໜ່ວຍງານການເຜີຍແຜ່ຂໍ້ມູນ ແລະ ການສົ່ງເສີມການມີສ່ວນຮ່ວມຂອງຊຸມຊົນ ຂອງໂຄງການດັ່ງກ່າວ.





ການຝຶກອົບຮົມຄັ້ງນີ້ ແມ່ນມີການຝຶກ ທັດສະການເປັນຄູຝຶກ (ToT), ແລະ ສິດທິທີ່ດິນຕາມປະເພນີ ແລະ ການແກ້ໄຂຂໍ້ຂັດແຍ້ງ. ເຊິ່ງເນື້ອຫາໃນການຝຶກອົບຮົມຄັ້ງນີ້ແມ່ນ ອີງໃສ່ ກົດໝາຍວ່າດ້ວຍ ປ່າໄມ້ສະບັບປັບປຸງ (2019) ແລະ ບັນດາລະບຽບການຕ່າງໆກ່ຽວກັບການນຳໃຊ້ທີ່ດິນຂອງປະຊາຊົນໃນເຂດປ່າໄມ້ທັງ 3 ປະເພດ ແລະ ສິດທິຕໍ່ກັບປ່າໄມ້ຂອງປະຊາຊົນ.

ຫຼັງຈາກສຳເລັດການເຂົ້າຝຶກອົບຮົມໃນນະຄອນຫຼວງວຽງຈັນແລ້ວ ທີມງານຄູ່ຝຶກ LIFE ກໍ່ໄດ້ໄປຮ່ວມກັບຜູ້ເຂົ້າຮ່ວມຝຶກອົບຮົມ ລົງພາກສະໜາມຕົວຈິງ ໃນເຂດພື້ນທີ່ເປົ້າໝາຍ ເພື່ອນຳເອົາຄວາມຮູ້ທີ່ໄດ້ຈາກການເຂົ້າຮ່ວມຝຶກອົມຮົມຄັ້ງນີ້ ໄປຝຶກຕໍ່ໃຫ້ກັບພະນັກງານຈາກໜ່ວຍງານທີ່ກ່ຽວຂ້ອງໃນຂັ້ນເມືອງ.

ຫຼັງຈາກນີ້ DoL, LFNC ແລະ LWU ຈະໄດ້ສືບຕໍ່ໃນການຈັດຝຶກອົບຮົມໃຫ້ກັບເຂດໃນພື້ນທີ່ເປົ້າ ໝາຍຂອງໂຄງການ ເຊິ່ງ ທີມງານ LIFE ກໍ່ຈະໄດ້ມີການຕິດຕາມປະເມີນຫຼັງຈາກມີການຈັດຝຶກອົບຮົມດັ່ງກ່າວສຳເລັດແລ້ວ.

ສາມາດອ່ານຂໍ້ມູນເພີ່ມເຕີມໄດ້ທີ່: https://bit.ly/37DM6fC



## ການຝຶກອົບຮົມ ສິດທິທີ່ດິນຕາມປະເພນີ

ໃນເດືອນ ດຽວກັນ ທາງທີມງານ LIFE ກໍ່ໄດ້ມີການຈັດຝຶກອົບຮົມແບບໃກ້ຊິດໃຫ້ກັບອົງການ ADRA Laos (ເຊິ່ງເປັນໜຶ່ງໃນສະມາຊິກຂອງ LIWG) ແລະ ຄູ່ຮ່ວມງານພາກລັດ ຂອງອົງການດັ່ງກ່າວ ໂດຍໄດ້ຝຶກອົບຮົມ ຫົວຂໍ້ ສິດທິການຄອບຄອງທີ່ດິນຕາມປະເພນີ ເປັນໄລຍະເວລາ 5 ວັນ ທີ່ເມືອງພູກູດ ແຂວງຊຽງຂວາງ. ການຝຶກອົບຮົມຄັ້ງນີ້ ແມ່ນເນັ້ນໃສ່ການສ້າງຄວາມອາດສາມາດໃຫ້ແກ່ພະນັກງານຂັ້ນເມືອງ ໃນການໄປເຜີຍແຜ່ຂໍ້ມູນທາງດ້ານສິດທິທີ່ດິນຕາມປະເພນີ ແລະ ການແກ້ໄຂຂໍ້ຂັດແຍ້ງແກ່ປະຊາຊົນໃນຂັ້ນບ້ານ ທີ່ຢູ່ໃນເມືອງພູກູດ.

ຫຼັງຈາກຝຶກອົບຮົມແລ້ວ ຜູ້ເຂົ້າຮ່ວມໄດ້ລົງພາກສະໜາມຕົວຈິງ ເພື່ອນຳໄປປະຕິບັດຕົວຈິງ ໃນຂັ້ນບ້ານ (ບ້ານເປົ້າໝາຍຂອງອົງການ ADRA). ຂັ້ນຕອນນີ້ ແມ່ນມີຄວາມສຳຄັນຫຼາຍ ເພາະຜົນຈາກການທົດລອງລົງສະໜາມຕົວຈິງນີ້ ແມ່ນເປັນການສະທ້ອນໃຫ້ເຫັນເຖິງຄວາມສາມາດ ແລະ ທັກສະວ່າ ຜູ້ເຂົ້າຮ່ວມສາມາດນຳໄປໃຊ້ໃນຕົວຈິງໄດ້ໜ້ອຍຫຼາຍແນວໃດຢູ່ໃນຂັ້ນທ້ອງຖິ່ນ ໂດຍສະເພາະແມ່ນຂັ້ນບ້ານ ຫຼັງຈາກທີ່ໄດ້ເຂົ້າຮ່ວມຝຶກອົບຮົມແລ້ວ.

# ບົດຄວາມ ແລະ ບົດເລື່ອງເທິງເວັບໄຊ້ LIWG

## ການຮັບປະກັນສິດຂອງແມ່ຍິງໃນການອອກໃບຕາດິນ ແລະ ການປ້ອງກັນການອອກໃບຕາດິນຊໍ້າຊ້ອນ




ເພື່ອເປັນສ່ວນໜຶ່ງ ໃນການສື່ສານຂໍ້ມູນໃຫ້ຄວາມຮູ້ກ່ຽວກັບ ຄວາມສຳຄັນໃນການຮັບປະກັນສິດຂອງແມ່ຍິງໃນການອອກໃບຕາດິນ ກໍ່ຄືການຮັບປະກັນສິດທິຂອງແມ່ຍິງຕໍ່ກັບທີ່ດິນ ພວກເຮົາຈຶ່ງໄດ້ນຳສະເໜີປະເດັນດັ່ງກ່າວໃນປະຕິທິນກົດໝາຍຂອງພວກເຮົາ ໃນຫົວຂໍ້: ການຮັບປະກັນສິດຂອງແມ່ຍິງໃນການອອກໃບຕາດິນ ແລະ ການປ້ອງກັນ ການອອກໃບຕາດິນຊໍ້າຊ້ອນ ປະຈຳເດືອນພຶດສະພາ-ມິຖຸນາ 2020.

ອ່ານເນື້ອຫາຂອງຫົວຂໍ້ນີ້ໄດ້ທີ່: https://bit.ly/2XmIA4a



## ດິນຂອງຟ້າ

ປື້ມເລື່ອງໂຮມເລື່ອງສັ້ນ ດິນຂອງຟ້າ ແມ່ນລວມລວມບົດເລື່ອງທີ່ຂຽນໂດຍນັກຮຽນມັດທະຍົມເມືອງປາຊ່ອງ,ແຂວງຈຳປາສັກ. ເຊິ່ງບັນດາເລື່ອງ ສັ້ນຕ່າງໆທີ່ຢູ່ໃນປື້ມເລື່ອງນີ້ ຕ່າງກໍ່ເປັນເລື່ອລາວທີ່ຕິດພັນກັບທີ່ດິນ, ແມ່ນໍ້າ ແລະ ປ່າໄມ້.
ປື້ມເລື່ອງນີ້ແມ່ນ ໄດ້ຮັບການສະໜັບສະໜູນຈາກ ສະມາຄົມນາໆຊາດເພື່ອມະນຸດ (GAPE) ໃນການຈັດພິມ ເຊິ່ງສາມາດດາວໂລດສະບັບອອນລາຍໄດ້ ທີ່ນີ້.



## ແຜ່ນດິນຄືຊີວິດ

ປື້ມເລື່ອງ ແຜ່ນດິນຄືຊີວິດ ແມ່ນປື້ມໂຮມເລື່ອງສັ້ນທີ່ຂຽນຂື້ນໂດຍນັກຮຽນມັດທະຍົມຢູ່ແຂວງພາກໃຕ້ຂອງລາວ ບັນດາເລື່ອງຕ່າງໆທີ່ຢູ່ໃນປື້ມເລື່ອງນີ້ແມ່ນເປັນກໍລະນີສຶກສາ ແລະ ຄວາມຮູ້ກ່ຽວກັບຜົນກະທົບຕໍ່ກັບທຳມະຊາດ ແລະ ສະພາບແວດລ້ອມ ເພື່ອໃຫ້ເຮົາມີສະຕິລະວັງຕົວ, ຫຼີກລ້ຽງບໍ່ໃຫ້ເກີດຄວາມເສຍຫາຍ ແລະ ເຮັດໃຫ້ປະຊາຊົນສາມາດທຳມາຫາກິນຢູ່ບົນຜືນແຜ່ນດິນຕອນນີ້ໄດ້ຢ່າງປອດໄພ.
ປື້ມເລື່ອງນີ້ ກໍ່ໄດ້ຮັບການສະໜັບສະໜູນຈາກ ອົງການ GAPE ເຊິ່ງສາມາດດາວໂລດທາງອອນລາຍໄດ້ ທີ່ນີ້.

# ແນະນຳ ບົດອ່ານ ແລະ ລາຍງານຟັງ

## ບົດລາຍງານພິເສດ: Overcoming threats to the Mekong's forests and people

*ໂດຍ ອົງການ RECOFTC*

ອົງການ RECOFTC ໄດ້ເຜີຍແຜ່ ບົດລາຍງານພິເສດທີ່ຊື່ວ່າ: Overcoming threats to the Mekong's forests and people (ການຈັດການກັບໄພຂົ່ມຂູ່ທີ່ມີຕໍ່ກັບຊັບພະຍາກອນປ່າໄມ້ ແລະ ຊຸມຊົນ ໃນພາກພື້ນລຸ່ມແມ່ນ້ຳຂອງ) ໃນເດືອນພຶດສະພານີ້. ບົດລາຍງານໄດ້ ເວົ້າເຖິງຄວາມຄືບໜ້າ, ບັນຫາ ແລະ ວິທີແກ້ໄຂທີ່ດີ ສຳລັບ 5 ປະເທດໃນພາກພື້ນລຸ່ມແມ່ນ້ຳຂອງ ຕໍ່ກັບການຄຸ້ມຄອງປ່າໄມ້.

ອ່ານບົດລາຍງານພິເສດນີ້ (ສະບັບພາສາອັງກິດ) ໄດ້ທີ່ນີ້: https://www.recoftc.org/special-report/forest-governance-mekong




## ການສູນເສຍເນື້ອທີ່ປ່າໄມ້ໃນທົ່ວໂລກ

*ໂດຍ Mongabay/Global Forest Watch*

ອົງການ FAO ກ່າວວ່າ ຊ່ວງໄລຍະ 20 ກວ່າປີທີ່ຜ່ານມາໃນທົ່ວໂລກ ໄດ້ສູນເສຍເນື້ອທີ່ປ່າໄມ້ ກວ່າ 178 ລ້ານເຮັກຕາ ເຊິ່ງເນື້ອທີ່ດັ່ງກ່າວ ແມ່ນທຽບເທົ່າກັບຂະໜາດຂອງ ປະເທດລີເບຍ. ໃນບົດບົດລາຍງານຂອງFAO ໄດ້ອະທິບາຍລາຍລະອຽດ ເຊິ່ງສາມາດອ່ານໄດ້ທີ່ນີ້: : https://bit.ly/2LqVlFo




ອີກລາຍງານໜຶ່ງໄດ້ກ່າວວ່າ ສະເພາະໃນປີ 2019 ເນື້ອທີ່ປ່າເຂດຮ້ອນໃນທົ່ວໂລກ ໄດ້ສູນເສຍເນື້ອທີ່ປົກຫຸມປ່າໄມ້ກວ່າ 11.9 ລ້ານເຮັກຕາ ໂດຍຂໍ້ມູນສະແດງໃຫ້ເຫັນວ່າ 1/3 (3.8 ລ້ານເຮັກຕາ) ຂອງຈຳນວນທີ່ສູນເສຍທັງໝົດ ແມ່ນເປັນພື້ນທີ່ປ່າໄມ້ດົງດິບທີ່ມີຄວາມສຳຄັນຢ່າງຍິ່ງຕໍ່ກັບຄວາມຫຼາກຫຼາຍທາງຊີວະພາບ ແລະ ການເກັບກັບກາສຄາຣບອນ. ເມື່ອຄິດໄລ່ເປັນອັດຕາການສູນເສຍດັ່ງກ່າວເຫັນວ່າ ໃນໂລກເຮົາມີການສູນເສຍປ່າໄມ້ໃນທຸກໆ 6 ວິນາທີ ໃນຮອບປີ 2019ທີ່ຜ່ານມາ. ອ່ານລາຍງານນີ້ໄດ້ທາງ GFW: https://bit.ly/2ZY7Lvc

## ລາຍການວິທະຍຸອອນລາຍ Belt and Road Podcast

*ຈັດລາຍການໂດຍ Erik Myxter-iino and Juliet Lu*

ລາຍການ Belt and Road Podcast ເປັນລາຍກາທີ່ສົນທະນາກ່ຽວກັບນະໂຍບາຍ Belt and Road (ໜຶ່ງແລກທາງ ໜຶ່ງເສັ້ນທາງ) ຂອງຈີນ ໃນບັນດາປະເທດທີ່ກຳລັງພັດທະນາ ໂດຍອີງໃສ່ ບົດລາຍງານຄົ້ນຄວ້າ ແລະ ເຊີນຜູ້ຊ່ຽວຊານຮ່ວມລາຍງານ ເພື່ອແລກປ່ຽນຄຳຄິດເຫັນ ແລະ ການວິເຄາະກ່ຽວກັບການຂະຫຍາຍໂຕຂອງຈີນໃນບັນດາປະເທດທີ່ກຳລັງພັດທະນາຜ່ານນະໂຍບາຍດັ່ງກ່າວ. ສາມາດຮັບຟັງທຸກໆຕອນ ທີ່: https://bit.ly/2DpR4Bf

## ເວັບໄຊ້ LandVoc: ແຫຼ່ງລວບລວມຄຳສັບກ່ຽວກັບປະເດັນທີ່ດິນ

*ຈັດຕັ້ງປະຕິບັດໂດຍ Land Portal*

LandVoc ແມ່ນ ພົດຈະນານຸກົມ (ມີການຈັດຄຳທີ່ເປັນຂັ້ນ) ຂອງການເຊື່ອມໂຍງການຄຸ້ມຄອງທີ່ດິນ ເຊິ່ງແມ່ນສູນລວມລວບຂໍ້ມູນທາງດ້ານຄຳສັບທີ່ກ່ຽວຂ້ອງກັບການຄຸ້ມຄອງທີ່ດິນ. LandVoc ໄດ້ມີການອະທິບາຍກອບແນວຄວາມຄິດກ່ຽວກັບປະເດັນທີ່ດິນຫຼາຍກວ່າ 310 ກວ່າເນື້ອຫາ ໂດຍມີການຈັດລຳດັບຊັ້ນຂອງແຕ່ລະກອບແນວຄວາມຄິດ ແລະ ມີການເຜີຍແຜ່ເປັນຫຼາຍພາສາເຊັ່ນ: ອັງກິດ,ຝຣັ່ງ, ສະເປນ, ປໍຕຸຍເກດ, ກຳປູເຈຍ, ຫວຽດນາມ, ມຽນມາ,ໄທ, ສະວາຮີລີ ແລະ ອາຣັບ. ເບິ່ງຄຳສັບຕ່າງໆກ່ຽວກັບປະເດັນທີ່ດິນໃນ LandVoc ທີ່: https://landvoc.org/

# ການສຳມະນາອອນລາຍກ່ຽວກັບປະເດັນທີ່ດິນ ແລະ ກະສິກຳ



ເນື່ອງຈາກການລະບາດພະຍາດໂຄວິດ 19 ທີ່ເກີດຂຶ້ນໃນທົ່ວໂລກ ອັນໄດ້ເຮັດໃຫ້ອົງການຈັດຕັ້ງຕ່າງໆ ໄດ້ ຫັນປ່ຽນຫຼາຍກິດຈະກຳ, ກອງປະຊຸມ, ການຝຶກອົບຮົມ ແລະ ງານຕ່າງໆ ມາຈັດ ໃນຮູບແບບອອນລາຍ. ໃນຊ່ວງໄຕມາດນີ້ ໄດ້ມີອົງການຈັດຕັ້ງສາກົນຈັດການສຳມະນາອອນລາຍຫຼາຍຂຶ້ນ ເຊິ່ງມີຫຼາຍຫົວຂໍ້ທີ່ນ່າສົນໃຈກ່ຽວກັບປະເດັນທີ່ດິນ ແລະ ຊັບພະຍາກອນທຳມະຊາດ.

## ງານສຳມະນາ LANDac Online Encounter 2020

LANDac ແມ່ນ ໜ່ວຍງານວິຊາການ ການຄຸ້ມຄອງທີ່ດິນເພື່ອຄວາມສະເໝີພາບ ແລະ ຄວາມຍືນຍົງ ໃນປະເທດເນເທີແລນ. ໃນທ້າຍເດືອນ ມິຖຸນາ 2020 LANDac ໄດ້ມີການຈັດງານສຳມະນາອອນລາຍຫຼາຍຫົວຂໍ້ທີ່ຕິດພັນກັບປະເດັນທີ່ດິນ ແລະ ຊັບພະຍາກອນທຳມະຊາດ ຂຶ້ນທາງອອນລາຍ ໂດຍຫົວຂໍ້ງານສຳມະນານີ້ແມ່ນ LANDac Online Encounter 2020. ໃນງານສຳມະນາອອນລາຍຄັ້ງນີ້ ໄດ້ມີການໂອ້ລົມກ່ຽວກັບຜົນກະທົບຂອງການລະບາດພະຍາດໂຄວິດ19 ຕໍ່ກັບການດຳລົງຊີວິດ ແລະ ສິດທິທີ່ດິນຂອງປະຊາຊົນ. ນອກຈາກນີ້ຍັງໄດ້ມີການແລກປ່ຽນຄວາມຄິດເຫັນຕໍ່ກັບຄຳຖາມທີ່ວ່າ *ການແຜ່ລະບາດຂອງພະຍາດໂຄວິດ19 ໄດ້ປ່ຽນແປງການວິທີການເຮັດວຽກແນວໃດ ແລະ ຈະຕ້ອງມີການລຳດັບຄວາມສຳຄັນແນວໃດຕໍ່ກັບການຄຸ້ມຄອງທີ່ດິນ ໃນຊຸມຊົນ ໃນຕໍ່ໜ້າ?.*




ເບິ່ງບັນທຶກວິດີໂອຂອງງານສຳມະນານີ້ທີ່:
https://bit.ly/2BVZJLx

## ຜົນກະທົບຂອງພະຍາດໂຄວິດ 19 ຕໍ່ກັບສິດທິທີ່ດິນ

ໃນລະຫວ່າງວັນທີ 26-28 ພຶດສະພາ ອົງການ Land Portal ໄດ້ຈັດງານສຳມະນາອອນລາຍຫຼາຍຫົວຂໍ້ກ່ຽວກັບການລະບາດຂອງພະຍາດໂຄວິດ 19 ແລະ ຜົນກະທົບຕໍ່ກັບປະເດັນທີ່ດິນ. ການຈັດງານສຳມະນາຄັ້ງນີ້ ແມ່ນປະກອບມີ 3 ຫົວຂໍ້ດ້ວຍກັນຄື: ຜົນກະທົບການຈາກການລະບາດພະຍາດໂຄວິດ19 ຕໍ່ກັບ ສິດທິທາງຊັບສິນ ແລະ ສິດທິທີ່ດິນຂອງແມ່ຍິງ, ການຮັບມືເລື່ອງການຖືກຂັບໄລ່ອອກຈາກພື້ນທີ່ (ທີ່ດິນ) ໃນຊ່ວງການລະບາດພະຍາດໂຄວິດ 19 ແລະ ຫຼັງຈາກການລະບາດສິ້ນສຸດ, ການຍ້າຍຖິ່ນຖານ, ການຖືກບັງຄັບໃຫ້ອອກຈາກພື້ນທີ່ ແລະ ການພັດທະນາເມືອງໃໝ່ ໃນບໍລິບົດຂອງການລະບາດພະຍາດໂຄວິດ 19.




ເບິ່ງບັນທຶກວິດີໂອຂອງງານສຳມະນານີ້ທີ່:
https://bit.ly/2ZdQKOw

## ການລະບາດພະຍາດໂຄວິດ19: ມາດຕະການໃນການແກ້ໄຂຜົນກະທົບທີ່ເກີດຂຶ້ນຕໍ່ກັບຕ່ອງໂສ້ການສ້າງມູນຄ່າດ້ານການຜະລິດກະສິກຳ

ງານສຳມະນານີ້ ແມ່ນໄດ້ມີການສົນທະນາກ່ຽວກັບຜົນກະທົບຕໍ່ພາກການຂົນສົ່ງສິນຄ້າການກະສິກຳຈາກຊາວກະສິກອນ ຫາ ຜູ້ປະກອບການ (ຜູ້ຊື້) ແລະ ກ່ຽວກັບ ກົນໄກທີ່ອາດເປັນໄປໄດ້ເພື່ອການຮັບມືກັບຂໍ້ຈຳກັດ ແລະ ຄວາມທ້າທາຍ ທີ່ເກີດຂຶ້ນ ໃນຂອດຂອງການຊ່ວຍເຫຼືອ ໃນການຜະລິດ ແລະ ຂົນສົ່ງຄ້າກະສິກຳ ໃນໄລຍະເວລາການລະບາດຂອງພະຍາດນີ້.




ເບິ່ງບັນທຶກວິດີໂອຂອງງານສຳມະນານີ້ທີ່:
https://youtu.be/1An6pmAFcOU

# ຂ່າວເດັ່ນປະຈຳໄຕມາດ

## ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ 8



ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດຊຸດທີ 8 ແມ່ນໄດ້ດຳເນີນແຕ່ວັນທີ 24 ມິຖຸນາ - 2 ກໍລະກົດ (ເປັນເວລາ 7 ວັນ) ໂດຍມີການນຳສະເໜີຫຼາຍປະເດັນທີ່ສຳຄັນພາຍໃນປະເທດ.
ກອງປະຊຸມໄດ້ຮັບຄວາມສົນໃຈຈາກໃວນຊົນຫຼາຍ ແລະ ມີການຍົກຫຼາຍປະເດັນຂຶ້ນມານຳສະເໜີໃນກອງປະຊຸມ ເຊິ່ງໜຶ່ງໃນນັ້ນກໍ່ແມ່ນເລື່ອງທີ່ກ່ຽວຂ້ອງກັບຊັບພະຍາກອນທຳມະຊາດ ໂດຍ ໄດ້ມີສະມາຊິກສະພາແຫ່ງຊາດ ຫຼາຍທ່ານກໍ່ ໂດຍສະເພາະ ການສະແດງຄວາມຄິດເຫັນ ແລະ ຄຳແນະນຳຕໍ່ກັບບົດລາຍງານກ່ຽວກັບການປະເມີນກວດການ ກ່ຽວກັບການຂຸດຄົ້ນ, ສຳຫຼວດ ບໍ່ແຮ່ ແລະ ທາດຕ່າງໆ ໃນທົ່ວປະເທດລາວ, ການປັບປຸງກົດໝາຍທີ່ກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ແລະ ລະບົບຍຸຕິທຳ ເຊິ່ງມີຫຼາຍຄຳເຫັນຂອງບັນດາທ່ານສະມາຊິກກ່າວໄວ້ຢ່າງໜ້າສົນໃຈໃນກອງປະຊຸມ. ອ່ານບັນດາຄຳຄິດເຫັນຂອງບັນດາ ສສຊ ກ່ຽວກັບປະເດັນເລື່ອງດັ່ງກ່າວທີ່: https://bit.ly/3gKk4SG

## ດຳລັດວ່າດ້ວຍ ວຽກງານດ້ານຊົນເຜົ່າ ເພື່ອສົ່ງເສີມຄວາມສາມັກຄີ ແລະ ຄວາມສະເໝີພາບ ຂອງບັນດາເຜົ່າ



ລັດຖະບານລາວໄດ້ ອອກດຳລັດວ່າດ້ວຍ ວຽກງານດ້ານຊົນເຜົ່າ ເພື່ອເຮັດໃຫ້ ຊົນເຜົ່າຕ່າງໆ ມີຄວາມສາມັກຄີປອງດອງ, ສະເໝີພາບ, ເຄົາລົບນັບຖື ໃນທົ່ວປະເທດ. ໃນດຳລັດສະບັບນີ້ນີ້ ແມ່ນໄດ້ກຳນົດ12 ນະໂຍບາຍສະເພາະ ຕໍ່ກັບວຽກງານຊົນເຜົ່າ. ສະເພາະ ນະໂຍບາຍດ້ານການປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແມ່ນໄດ້ກຳນົດໄວ້ 6 ຂໍ້ ໃນມາດຕາ 15.
ຂໍ້ຄວາມສຳຄັນໃນ ມາດຕາທີ 15 ສາມາດອ່ານໄດ້ທີ່: https://bit.ly/38HtP1g

## ໄຟໄໝ້ປ່າທີ່ເກີດຂຶ້ນໃນບັນດາແຂວງພາກເໜືອຂອງປະເທດລາວ



ຕັ້ງແຕ່ຕົ້ນເດືອນມີນາ ຫາ ເມສາ ປີນີ້ ເຫັນວ່າ ໄຟໄໝ້ປ່າແມ່ນເກີດຂຶ້ນເປັນບໍລິເວນກວ້າງໃນຫຼາຍພື້ນທີ່ ໃນບັນດາແຂວງທາງພາກເໜືອຂອງປະເທດລາວໂດຍສະເພາະ ໃນແຂວງ ອຸດົມໄຊ, ຫຼວງນ້ຳທາ, ຫຼວງພະບາງ ແລະ ຜົ້ງສາລີ (ເບິ່ງວີດີໂອ ເລື່ອງນີ້ ທີ່ນີ້) ເຊິ່ງໄດ້ເຮັດໃຫ້ ເນື້ອທີ່ປ່າໄມ້ ແລະ ພື້ນທີ່ການຜະລິດຂອງປະຊາຊົນຫຼາຍເຮັກຕາຖືກທຳລາຍ. ສະເພາະໃນແຂວງອຸດົມໄຊ ໄຟໄໝ້ປ່າທີ່ເກີດຂຶ້ນໃນປີນີ້ ລາມໄໝ້ເນື້ອທີ່ປ່າໄມ້ເປັນບໍລິເວນກວ້າງ ໄໝ້ລາມເນື້ອທີ່ປ່າໄມ້ຫຼາຍກວ່າ 42,832 ເຮັກຕາ. ອ່ານເລື່ອງນີ້ເພີ່ມເຕີມທີ່: https://bit.ly/3epkTyH

## ໂຄງການພະລັງງານຄວາມຮ້ອນຈາກຖ່ານຫີນຂະໜາດ 1,000 ເມກາວັດ ທີ່ເຊກອງ



ລັດຖະບານລາວເປີດໄຟຂຽວໃຫ້ບໍລິສັດເອກະຊົນຈາກສິງກະໂປສຶກສາຄວາມເປັນໄປໄດ້ໃນການລົງທຶນ ເພື່ອພັດທະນາໂຄງການພະລັງງານຄວາມຮ້ອນຈາກຖ່ານຫີນ ຂະໜາດ 1,000 ເມກາວັດ ທີ່ເມືອງດາກຈຶງ ແຂວງເຊກອງ. ສຳລັບພະລັງງານທີ່ຜະລິດຈາກໂຄງການນີ້ແມ່ນຈະມີການສົ່ງຂາຍໃຫ້ແກ່ປະເທດໄທ, ກຳປູເຈຍ ແລະ ຫວຽດນາມ. ເມື່ອມີການດຳເນີນພັດທະນາໂຄງການນີ້ ຈະເປັນໂຄງການພະລັງງານຖ່ານຫີນແຫ່ງທີສອງທີ່ສ້າງຂຶ້ນໃນປະເທດລາວ.
ອ່ານຂໍ້ມູນເພີ່ມເຕີມໄດ້ທີ່: https://bit.ly/3dDVC4p

## ຟັງສຽງຂອງຊາວກະສິກອນລາວ: ພະຍາດໂຄວິດ19 ແລະ ຜົນກະທົບຕໍ່ການກະສິກຳ




ໃນຊ່ວງການເກີດລະບາດພະຍາດໂຄວິດ19 ມີຫຼາຍພາກສ່ວນກໍໄດ້ຮັບຜົນກະທົບຈາກເຫດການທີ່ເກີດຂຶ້ນ ໜຶ່ງໃນນັ້ນກໍແມ່ນ ກຸ່ມກະສິກອນລາວ. ຕໍ່ກັບບັນຫາດັ່ງກ່າວ ເຄືອຂ່າຍຊາວກະສິກອນລາວ (LFN) ໄດ້ເຜີຍແຜ່ວິດີໂອກ່ຽວກັບສຽງສະທ້ອນຈາກຊາວກະສິກອນລາວທີ່ໄດ້ຮັບຜົນກະທົບໃນໃນຊ່ວງວິກິດທີ່ເກີດຈາກການລະບາດພະຍາດໂຄວິດ19. ເຊິ່ງສາມາດເຂົ້າໄປເບິ່ງວິດີໂອທັງໝົດໄດ້ທີ່ ເຟສບຸກເພສຂອງ LFN ຫຼື ຕາມລິ້ງນີ້: https://bit.ly/2VDxhoQ

# ກິດຈະກຳໃນສະບັບຖັດໄປ (ກໍລະກົດ - ກັນຍາ 2020)

- ກອງປະຊຸມສະມາຊິກຫຼັກຂອງ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ
- ກອງປະຊຸມ ຂອງທີມງານສ້າງປະຕິທິນກົດໝາຍສະບັບປີ 2021
- ການປະຕິບັດກິດຈະກຳຂອງໄວໜຸ່ມພາຍໃຕ້ໂຄງການ Voice ໃນບ້ານຂອງຕົນເອງ
- ການຝຶກອົບຮົມກ່ຽວກັບສິດທິທີ່ດິນ ແລະ ຫົວຂໍ້ທີ່ກ່ຽວຂ້ອງ ໂດຍໂຄງການ LIFE
- ບົດສຶກສາ ສິດທິແມ່ຍິງຕໍ່ກັບທີ່ດິນ

**ແຈ້ງການ:** ຫຼັງຈາກໜຶ່ງປີ ໃນການ ເປັນປະທານກຸ່ມ ແລະ ສະໜັບສະໜູນວຽກງານຕ່າງໆຂອງ LIWG, ທ່ານ Thibaut Hanquet, ຜູ້ບໍລິຫານອົງການ Oxfam ລາວ ແມ່ນໄດ້ສິ້ນສຸດການເປັນໜຶ່ງໃນຄະນະກຳມະການຂອງ LIWG ແລະ ຈະເດີນທາງໄປປະເທດອື່ນ ເພື່ອຮັບຜິດຊອບວຽກງານໃໝ່. ສະນັ້ນ ທາງກອງເລຂາ ແລະ ສະມາຊິກຄະນະກຳມະການ ຈຶ່ງໄດ້ມີການສະເໜີ ທ່ານ ສັນຕິ ໄຊປັນຍາ, ຜູ້ອຳນວຍການ ອົງການອະນຸລັກສັດປ່າ (WCS) ປະຈຳປະເທດລາວ ຂຶ້ນມາເປັນປະທານເຄືອຂ່າຍແທນທ່ານ Thibaut Hanquet. ພ້ອມນັ້ນໃນກອງປະຊຸມສະມາຊິກຫຼັກທີ່ຈະຈັດຂຶ້ນໃນເດືອນ ສິງຫານີ້ ທາງເຄືອຂ່າຍ ກໍ່ຈະປະກາດເປີດຮັບສະມາຊິກອີກທ່ານໜຶ່ງ ເພື່ອເຂົ້າຮ່ວມເປັນໜຶ່ງໃນຄະນະກຳມະການຂອງ LIWG.

ໃນຖານະຕົວແທນຂອງເຄືອຂ່າຍ ທາງກອງເລຂາ ຂໍສະແດງຄວາມຂອບໃຈທ່ານ Thibaut Hanquet ທີ່ສະໜັບສະໜູນວຽກງານຂອງເຄືອຂ່າຍໃນຕະຫຼອດໜຶ່ງປີທີ່ຜ່ານມາເປັນຢ່າງດີ ແລະ ພວກເຮົາກໍ່ຂໍໃຊ້ພື້ນນີ້ ໃນການແຈ້ງການຢ່າງເປັນທາງການວ່ານັບແຕ່ນີ້ເປັນຕົ້ນໄປ ທ່ານສັນຕິ ໄຊປັນຍາ ຈະມາຮັບໜ້າທີ່ເປັນປະທານຄົນໃໝ່ ຂອງເຄືອຂ່າຍ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ ເຮົາ.



**ພວກເຮົາຫວັງຢ່າງຍິ່ງວ່າທ່ານຈະມ່ວນຊື່ນກັບການອ່ານຈົດໝາຍຂ່າວສະບັບນີ້**

**ຂໍໃຫ້ບັນດາທ່ານມີສຸຂະພາບແຂງແຮງ ແລະ ປອດໄພຈາກໄພພະຍາດ!**

ຕິດຕໍ່ ແລະ ຕິດຕາມພວກເຮົາໄດ້ທີ່:

**ໂທ:** +85630 9815657
**ອີເມລ໌:** co@laolandinfo.org
**ເວັບໄຊທ໌:** www.laolandinfo.org
**ເຟສບຸກ :** Land Information Working Group

ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ LIWG